ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 245 /ລບ
ນະຄອນຫຼວງວຽງຈັນ, ວັນທີ 22.05.2020.

# ດຳລັດ
# ວ່າດ້ວຍ ການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບ ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍແຮງງານ ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013;
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 0103/ຣສສ, ລົງວັນທີ 14 ມັງກອນ 2020.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ, ສາມາດປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ອອກແຮງງານ ແລະ ອົງການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ແນໃສ່ສົ່ງເສີມການມີວຽກເຮັດງານທຳ ແລະ ຍົກລະດັບສີມືແຮງງານ ຂອງພົນລະເມືອງລາວ ໃຫ້ມີ ຄວາມຮູ້, ບົດຮຽນ, ປະສົບການ ແລະ ກຳໄດ້ ດ້ານເຕັກນິກ ວິຊາການ ທີ່ກ້າວໜ້າ ແລະ ມີຊີວິດການເປັນຢູ່ທີ່ດີຂຶ້ນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ**

ການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ແມ່ນ ການສົ່ງຜູ້ອອກແຮງງານທີ່ເປັນພົນລະເມືອງລາວ ໄປເຮັດວຽກ, ຝຶກງານ ແລະ ຝຶກໜ້າວຽກ ໂດຍອົງການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຕາໜ່າງການບໍລິການຈັດຫາງານ** ໝາຍເຖິງ ໜ່ວຍງານແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນບ້ານ, ຈຸດບໍລິການຈັດຫາງານ ຂັ້ນເມືອງ, ຂັ້ນແຂວງ, ບໍລິສັດຈັດຫາງານ ແລະ ສະຖານທີ່ພັດທະນາສີມືແຮງງານ;

2. **ສີມືແຮງງານ** ໝາຍເຖິງ ທັກສະ, ຄວາມຊໍານານງານ, ຄວາມສາມາດອອກແຮງງານ ແລະ ທັດສະນະຄະຕິ ໃນການອອກແຮງງານ;
3. **ໃບອະນຸຍາດຈັດສົ່ງ** ໝາຍເຖິງ ໃບອະນຸຍາດສົ່ງຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ຊຶ່ງອອກໃຫ້ ໂດຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
4. **ບັດອະນຸຍາດໄປເຮັດວຽກຢູ່ຕ່າງປະເທດ** ໝາຍເຖິງ ບັດແຮງງານຂອງຜູ້ອອກແຮງງານ ທີ່ເປັນພົນລະເມືອງລາວ ທີ່ຈະໄປເຮັດວຽກຢູ່ຕ່າງປະເທດ ຊຶ່ງອອກໃຫ້ ໂດຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
5. **ຝຶກງານ** ໝາຍເຖິງ ການສົ່ງຜູ້ອອກແຮງງານລາວ ທີ່ເປັນນັກຝຶກອົບຮົມ ໄປຝຶກເຮັດວຽກຢູ່ຕ່າງປະເທດ ຕາມຂອບເຂດການຮ່ວມມື ຂອງສອງຝ່າຍ;
6. **ຝຶກໜ້າວຽກ** ໝາຍເຖິງ ການສົ່ງຜູ້ອອກແຮງງານລາວ ໄປຝຶກໜ້າວຽກຕົວຈິງ ຢູ່ບໍລິສັດໃດໜຶ່ງ ທີ່ມີສາຂາ ຫຼື ບໍລິສັດແມ່ ຢູ່ຕ່າງປະເທດ ໃນໄລຍະເວລາບໍ່ເກີນ ໜຶ່ງ ປີ;
7. **ວີຊາແຮງງານ** ໝາຍເຖິງ ການອະນຸຍາດໃຫ້ຜູ້ອອກແຮງງານລາວໄປອອກແຮງງານຢູ່ຕ່າງປະເທດ ຢ່າງຖືກຕ້ອງ ຕາມກົດໝາຍ ຂອງປະເທດປາຍທາງ;
8. **ສັນຍາແຮງງານ** ໝາຍເຖິງ ການຕົກລົງ ລະຫວ່າງ ຜູ້ອອກແຮງງານ ກັບ ຜູ້ໃຊ້ແຮງງານ ຫຼື ລະຫວ່າງ ຜູ້ຕາງໜ້າຜູ້ອອກແຮງງານ ກັບ ຜູ້ຕາງໜ້າຜູ້ໃຊ້ແຮງງານ ກ່ຽວກັບເງື່ອນໄຂການເຮັດວຽກ, ເງິນເດືອນ ຫຼື ຄ່າແຮງງານ, ສະຫວັດດີການ ແລະ ນະໂຍບາຍອື່ນ;
9. **ສັນຍາຜູກພັນ** ໝາຍເຖິງ ການຕົກລົງ ລະຫວ່າງ ຜູ້ອອກແຮງງານ ກັບ ອົງການຈັດສົ່ງແຮງງານໄປເຮັດວຽກຢູ່ຕ່າງປະເທດ;
10. **ສັນຍາສະໜອງແຮງງານ** ໝາຍເຖິງ ການຕົກລົງ ລະຫວ່າງ ອົງການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ກັບ ຝ່າຍຮັບເອົາແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ**

ລັດ ຊຸກຍູ້ ແລະ ສົ່ງເສີມ ການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ດ້ວຍການວາງນະໂຍບາຍ, ສະໜອງຂໍ້ມູນ ຂ່າວສານ ແລະ ສ້າງເງື່ອນໄຂ ທີ່ຈໍາເປັນ ເພື່ອຍົກລະດັບສີມືແຮງງານ ແລະ ຊີວິດການເປັນຢູ່ ຂອງພົນລະເມືອງລາວ.

ລັດ ສົ່ງເສີມການຂະຫຍາຍຕະຫຼາດແຮງງານ, ຕະຫຼາດແຮງງານທີ່ມີລາຍໄດ້ສູງ, ຕະຫຼາດທີ່ຮັບແຮງງານຈໍານວນຫຼາຍ ຢູ່ຕ່າງປະເທດ, ການບໍາລຸງສ້າງພະນັກງານຄຸ້ມຄອງ, ພັດທະນາສີມືແຮງງານ ແລະ ຄວາມຮູ້ດ້ານພາສາຕ່າງປະເທດໃຫ້ຜູ້ອອກແຮງງານ.

ລັດ ຊຸກຍູ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນ ແລະ ລົງທຶນ ເຂົ້າໃນການພັດທະນາວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ**

ວຽກງານຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ໃຫ້ປະຕິບັດ ຕາມຫຼັກການ ດັ່ງນີ້:

1. ສອດຄ່ອງ ກັບ ແນວທາງນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການ;
2. ຮັບປະກັນ ການຄຸ້ມຄອງ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງຜູ້ອອກແຮງງານ, ຜູ້ໃຊ້ແຮງງານ ແລະ ອົງການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
4. ຮັບປະກັນ ຄວາມປອດໄພ, ວ່ອງໄວ, ຊັດເຈນ ແລະ ມີປະສິດທິພາບ, ມີຄວາມສະເໝີພາບ, ຍຸຕິທໍາ, ໂປ່ງໃສ ແລະ ສາມາດກວດສອບໄດ້;
5. ຮັບປະກັນ ໃຫ້ແຮງງານລາວ ກັບຄືນສູ່ພູມລໍາເນົາເດີມ ແລະ ສ້າງເງື່ອນໄຂ ໃຫ້ມີວຽກເຮັດງານທໍາຢູ່ພາຍໃນປະເທດ;
6. ປະຕິບັດ ຕາມຂອບການຮ່ວມມື ຂອງສອງຝ່າຍ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອພັດທະນາວຽກງານການຈັດສົ່ງແຮງງານໄປເຮັດວຽກຢູ່ຕ່າງປະເທດ.

## ໝວດທີ 2
## ຜູ້ອອກແຮງງານລາວ ທີ່ໄປເຮັດວຽກຢູ່ຕ່າງປະເທດ

**ມາດຕາ 8 ຜູ້ອອກແຮງງານລາວ ທີ່ໄປເຮັດວຽກຢູ່ຕ່າງປະເທດ**

ຜູ້ອອກແຮງງານລາວໄປຕ່າງປະເທດ ແມ່ນ ພົນລະເມືອງລາວ ທີ່ໄດ້ຮັບອະນຸຍາດໃຫ້ໄປເຮັດວຽກ, ຝຶກງານ ແລະ ຝຶກຫັດວຽກ ຢູ່ຕ່າງປະເທດ ຢ່າງຖືກຕ້ອງ ຕາມກົດໝາຍ.

**ມາດຕາ 9 ເງື່ອນໄຂຂອງຜູ້ອອກແຮງງານລາວທີ່ຈະໄປເຮັດວຽກຢູ່ຕ່າງປະເທດ**

ຜູ້ອອກແຮງງານລາວທີ່ຈະໄປເຮັດວຽກຢູ່ຕ່າງປະເທດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນພົນລະເມືອງລາວ ແລະ ດຳລົງຊີວິດຢູ່ ສປປ ລາວ;
2. ມີອາຍຸ ສິບແປດ ປີ ຂຶ້ນໄປ;
3. ມີຄວາມສະໝັກໃຈໄປເຮັດວຽກຢູ່ຕ່າງປະເທດ;
4. ມີລະດັບການສຶກສາຈົບປະຖົມສົມບູນຂຶ້ນໄປ ຫຼື ມີໃບຢັ້ງຢືນວິຊາສະເພາະໃດໜຶ່ງ ທີ່ສອດຄ່ອງກັບຕຳແໜ່ງງານທີ່ຕ້ອງການ;
5. ມີສຸຂະພາບແຂງແຮງ ຕາມຄວາມຕ້ອງການ ຂອງປະເທດຮັບແຮງງານ;
6. ບໍ່ຖືກສານຕັດສິນລົງໂທດ ໃນສະຖານການກະທຳຜິດ ໂດຍເຈດຕະນາ;
7. ຕອບສະໜອງຄວາມຕ້ອງການດ້ານພາສາຕ່າງປະເທດ, ເງື່ອນໄຂທາງວິຊາຊີບ, ດ້ານວິຊາການ ແລະ ທັກສະອື່ນທີ່ຕ້ອງການ ໂດຍປະເທດຮັບແຮງງານ;
8. ມີສັນຍາຜູກພັນ ແລະ ສັນຍາແຮງງານ;
9. ເງື່ອນໄຂອື່ນ ທີ່ເຫັນວ່າຈຳເປັນ.

**ມາດຕາ 10 ສິດ ຂອງຜູ້ອອກແຮງງານລາວທີ່ຈະໄປເຮັດວຽກຢູ່ຕ່າງປະເທດ**

ຜູ້ອອກແຮງງານລາວທີ່ຈະໄປເຮັດວຽກຢູ່ຕ່າງປະເທດ ມີສິດ ດັ່ງນີ້:

1. ໄດ້ຮັບຄ່າແຮງງານ ແລະ ຄ່າຕອບແທນອື່ນ ຕາມສັນຍາ ແລະ ຕາມກົດໝາຍ;
2. ເຂົ້າເປັນສະມະຊິກປະກັນສັງຄົມ ແລະ ໄດ້ຮັບອຸດໜູນຕ່າງໆ;
3. ໄດ້ຮັບການຊ່ວຍເຫຼືອຈາກພາກສ່ວນທີ່ກ່ຽວຂ້ອງຢູ່ປະເທດຮັບແຮງງານ ແລະ ປະເທດສົ່ງແຮງງານ ໃນກໍລະນີມີຂໍ້ຂັດແຍ່ງດ້ານແຮງງານ, ຖືກເອົາປຽບ ຫຼື ຖືກກົດຂີ່ຂູດຮີດແຮງງານ;
4. ໂອນເງິນ, ເຄື່ອນຍ້າຍຊັບສິນຂອງຕົນ ກັບຄືນປະເທດ;
5. ເກັບຮັກສາ ໜັງສືຜ່ານແດນ (Passport), ເອກະສານສັນຍາ ແລະ ເອກະສານອື່ນ ທີ່ກ່ຽວຂ້ອງກັບຕົນ;
6. ໄດ້ຮັບ ຂໍ້ມູນ ຂ່າວສານ ກ່ຽວກັບການໄປເຮັດວຽກຢູ່ຕ່າງປະເທດ;
7. ຕິດຕໍ່ພົວພັນ ກັບອົງການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ຢ່າງເປັນປົກກະຕິ;

8. ປຽນຜູ້ໃຊ້ແຮງງານ ຕາມເງື່ອນໄຂ ແລະ ລະບຽບການ ຂອງປະເທດຮັບແຮງງານ ແລະ ປະເທດສົ່ງແຮງງານ;
9. ຍື່ນຄຳຮ້ອງ ຫຼື ຄຳສະເໜີ ຕໍ່ອົງການທີ່ກ່ຽວຂ້ອງ;
10. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 11 ພັນທະ ຂອງຜູ້ອອກແຮງງານລາວທີ່ຈະໄປເຮັດວຽກຢູ່ຕ່າງປະເທດ**

ຜູ້ອອກແຮງງານລາວທີ່ຈະໄປເຮັດວຽກຢູ່ຕ່າງປະເທດ ມີພັນທະ ດັ່ງນີ້:

1. ປະຕິບັດກົດໝາຍ ແລະ ຮີດຄອງປະເພນີ ຂອງ ສປປ ລາວ ແລະ ປະເທດຮັບແຮງງານ;
2. ອະນຸລັກຮັກສາ ແລະ ສົ່ງເສີມ ປະເພນີອັນດີງາມ ຂອງຊາດ;
3. ຮຽນຮູ້ ວິຊາຊີບ, ພາສາຕ່າງປະເທດ ແລະ ຊອກຮູ້ຮໍ່າຮຽນກົດໝາຍ ກ່ຽວຂ້ອງ;
4. ຕ້ອງໄດ້ຮັບການຝຶກອົບຮົມ ຕາມຫຼັກສູດທີ່ກ່ຽວຂ້ອງ ກ່ອນທີ່ຈະໄປເຮັດວຽກຢູ່ຕ່າງປະເທດ;
5. ເຮັດວຽກ ຕາມສະຖານທີ່ ທີ່ກຳນົດໄວ້ ແລະ ປະຕິບັດກົດລະບຽບ ໃນສະຖານທີ່ເຮັດວຽກ ຢ່າງເຂັ້ມງວດ;
6. ກັບຄືນປະເທດ ພາຍຫຼັງສິ້ນສຸດສັນຍາ;
7. ມອບເງິນ ເຂົ້າກອງທຶນຊ່ວຍເຫຼືອຜູ້ອອກແຮງງານລາວ ທີ່ເຮັດວຽກຢູ່ຕ່າງປະເທດ ຕາມທີ່ໄດ້ກຳນົດໃນກົດໝາຍວ່າດ້ວຍ ແຮງງານ;
8. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ ຈາກການລະເມີດສັນຍາ, ກົດໝາຍ ຂອງ ສປປ ລາວ ແລະ ກົດໝາຍ ຂອງປະເທດຮັບແຮງງານ;
9. ເຂົ້າເປັນສະມາຊິກອົງການປະກັນສັງຄົມ ຕາມກົດໝາຍ ຂອງ ສປປ ລາວ ແລະ ກົດໝາຍຂອງປະເທດຮັບແຮງງານ;
10. ປະກອບເອກະສານສ່ວນຕົວ ເປັນຕົ້ນ ປຶ້ມສຳມະໂນຄົວ, ບັດປະຈຳຕົວ, ໃບແຈ້ງໂທດ ແລະ ໜັງສືຜ່ານແດນ;
11. ປະຕິບັດ ຕາມສັນຍາສະໜອງແຮງງານ, ສັນຍາຜູກພັນ ແລະ ສັນຍາແຮງງານ;
12. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 3
## ອົງການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ

**ມາດຕາ 12 ອົງການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ**

ອົງການຈັດສົ່ງແຮງງານລາວໄປຕ່າງປະເທດ ມີດັ່ງນີ້:

1. ໜ່ວຍງານວິຊາການ ແມ່ນ ໜ່ວຍງານທີ່ເຮັດໜ້າທີ່ບໍລິການຈັດຫາງານ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໂດຍເຮັດໜ້າທີ່ເປັນອົງການຈັດສົ່ງແຮງງານ ແລະ ອົງການຄຸ້ມຄອງແຮງງານ;
2. ວິສາຫະກິດບໍລິການຈັດຫາງານ ແມ່ນ ບໍລິສັດຈັດຫາງານ ທີ່ໄດ້ຮັບອະນຸຍາດ ຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃຫ້ດຳເນີນທຸລະກິດຈັດສົ່ງແຮງງານລາວ ໄປເຮັດວຽກຢູ່ຕ່າງປະເທດ.

**ມາດຕາ 13 ເງື່ອນໄຂຂອງການຈັດສົ່ງ ແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ**

ການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ມີເງື່ອນໄຂ ດັ່ງນີ້:

1. ເປັນບໍລິສັດຈັດຫາງານ ທີ່ມີໃບອະນຸຍາດ ດຳເນີນທຸລະກິດບໍລິການຈັດຫາງານຢູ່ພາຍໃນ ແລະ ຕ່າງປະເທດ ຕ້ອງມີກຳນົດເວລາດຳເນີນງານ ຢ່າງໜ້ອຍ ຫົກສິບ ວັນ ກ່ອນໝົດອາຍຸການນຳໃຊ້;
2. ມີທຶນຈົດທະບຽນ ແລະ ເງິນຄ້ຳປະກັນ ຕາມກົດໝາຍ;

3. ມີຕົວແທນຢູ່ຕ່າງປະເທດ ເພື່ອຕິດຕໍ່, ປະສານງານ ແລະ ຊ່ວຍເຫຼືອແຮງງານ;
4. ມີຕະຫຼາດແຮງງານ ແລະ ຜູ້ອອກແຮງງານ ທີ່ໄດ້ຮັບການຢັ້ງຢືນ ຈາກອົງການປົກຄອງທ້ອງຖິ່ນ;
5. ມີລະບຽບພາຍໃນ ຂອງບໍລິສັດ ທີ່ໄດ້ຖືກຮັບຮອງຈາກອົງການຄຸ້ມຄອງແຮງງານ;
6. ມີ ສັນຍາສະໜອງແຮງງານ, ສັນຍາຜູກພັນ ແລະ ສັນຍາແຮງງານ.

**ມາດຕາ 14 ສິດ ຂອງອົງການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ**

ອົງການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ມີສິດ ດັ່ງນີ້:

1. ພົວພັນກັບບໍລິສັດ ຫຼື ອົງການຢູ່ປະເທດ ທີ່ຈະຮັບເອົາແຮງງານລາວ;
2. ຂໍອະນຸຍາດຈັດສົ່ງແຮງງານ ໃຫ້ຖືກຕ້ອງ ຕາມກົດໝາຍ;
3. ເຊັນສັນຍາສະໜອງແຮງງານ ແລະ ສັນຍາແຮງງານ ກັບຜູ້ໃຊ້ແຮງງານ ຫຼື ຜູ້ຕາງໜ້າຢູ່ປະເທດຮັບແຮງງານ ພາຍຫຼັງໄດ້ຮັບອະນຸຍາດ ຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
4. ເຊັນສັນຍາຜູກພັນ ກັບຜູ້ອອກແຮງງານລາວ ແລະ ຈັດສົ່ງຜູ້ອອກແຮງງານລາວໄປຕ່າງປະເທດ;
5. ສ້າງເງື່ອນໄຂໃຫ້ຜູ້ອອກແຮງງານ ໄດ້ຮັບສິດ ແລະ ຜົນປະໂຫຍດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ເປັນຕົ້ນ ການເຂົ້າເຖິງຂໍ້ມູນ ຂ່າວສານ, ການພັດທະນາສີມືແຮງງານ, ການປະກັນສັງຄົມ ແລະ ໄດ້ຮັບການບໍລິການດ້ານສັງຄົມ;
6. ຊຸກຍູ້ ໃຫ້ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ປະຕິບັດ ຕາມສັນຍາແຮງງານ ແລະ ສັນຍາຜູກພັນ;
7. ສະເໜີ ໃຫ້ຜູ້ໃຊ້ແຮງງານອອກໜັງສືຢັ້ງຢືນການຜ່ານງານ ໃຫ້ຜູ້ອອກແຮງງານ ພາຍຫຼັງສິ້ນສຸດສັນຍາ ຕາມກົດໝາຍ;
8. ໄດ້ຮັບຄ່າບໍລິການ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ;
9. ໄດ້ຮັບ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
10. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ໃຫ້ອົງການຄຸ້ມຄອງແຮງງານຊາບ ຢ່າງເປັນປົກກະຕິ;
11. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 15 ພັນທະ ຂອງອົງການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ**

ອົງການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ມີພັນທະ ດັ່ງນີ້:

1. ປະຕິບັດ ແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການ;
2. ຈັດສົ່ງແຮງງານລາວໄປເຮັດວຽກ, ຝຶກງານ, ຝຶກໜ້າວຽກ ຢູ່ຕ່າງປະເທດ ຕາມສັນຍາ ແລະ ຕາມກົດໝາຍ;
3. ຈັດສົ່ງຜູ້ອອກແຮງງານ ຄືນສູ່ພູມລຳເນົາເດີມ ພາຍຫຼັງສິ້ນສຸດສັນຍາ ຫຼື ໃນກໍລະນີ ລະເມີດສັນຍາ ແລະ ກໍລະນີສຸກເສີນ;
4. ອຳນວຍຄວາມສະດວກໃນການໂອນເງິນ ແລະ ເຄື່ອນຍ້າຍຊັບສິນ ຂອງຜູ້ອອກແຮງງານ ເຖິງປະເທດສົ່ງແຮງງານ ຕາມກົດໝາຍ ແລະ ລະບຽບການ ຂອງຄູ່ພາຄີ;
5. ແຈ້ງລາຍຊື່ ຂອງແຮງງານລາວ ທີ່ຖືກຈັດສົ່ງໄປເຮັດວຽກຢູ່ຕ່າງປະເທດ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ;
6. ສະໜອງ ຂໍ້ມູນ ຂ່າວສານ ກ່ຽວກັບການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ພະແນກແຮງງານ ແລະ ສະຫວັດດີການສັງຄົມຂັ້ນແຂວງ ໃນກໍລະນີເກີດມີບັນຫາ;
7. ມອບເງິນເຂົ້າກອງທຶນຊ່ວຍເຫຼືອຜູ້ອອກແຮງງານ ທີ່ເຮັດວຽກຢູ່ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

8. ຝຶກອົບຮົມຄວາມພ້ອມໃຫ້ຜູ້ອອກແຮງງານລາວ ກ່ອນການຈັດສົ່ງໄປເຮັດວຽກຢູ່ຕ່າງປະເທດ;
9. ຕິດຕາມ, ກວດກາ, ປົກປ້ອງ, ຄຸ້ມຄອງ ແລະ ໃຫ້ການຊ່ວຍເຫຼືອແກ່ ຜູ້ອອກແຮງງານລາວ ໃນໄລຍະເຮັດວຽກຢູ່ຕ່າງປະເທດ;
10. ຈ່າຍຄ່າທຳນຽມ, ຄ່າບໍລິການ, ອາກອນ ໃຫ້ລັດ ຢ່າງຖືກຕ້ອງ ແລະ ຄົບຖ້ວນ;
11. ເຄົາລົບ ຮີດຄອງປະເພນີ ແລະ ກົດໝາຍ ຂອງປະເທດຕົນ ແລະ ປະເທດທີ່ຕົນ ສົ່ງຜູ້ອອກແຮງງານລາວໄປເຮັດວຽກ;
12. ຮັບຜິດຊອບ ຕໍ່ຜົນປະໂຫຍດ ຂອງຜູ້ອອກແຮງງານ ທີ່ຕົນສົ່ງໄປເຮັດວຽກຢູ່ຕ່າງປະເທດ ຕາມສັນຍາ;
13. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 4
## ເອກະສານຂໍອະນຸຍາດ, ຄ່າທຳນຽມ ແລະ ຄ່າບໍລິການ

### ມາດຕາ 16 ເອກະສານຂໍອະນຸຍາດຈັດສົ່ງຜູ້ອອກແຮງງານລາວທີ່ຈະເຮັດວຽກຢູ່ຕ່າງປະເທດ

ເອກະສານຂໍອະນຸຍາດຈັດສົ່ງຜູ້ອອກແຮງງານລາວທີ່ເຮັດວຽກຢູ່ຕ່າງປະເທດ ມີ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດນຳສົ່ງຜູ້ອອກແຮງງານລາວໄປຕ່າງປະເທດ ຕາມແບບພິມ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ທີ່ໄດ້ກຳນົດ;
2. ສຳເນົາໃບອະນຸຍາດດຳເນີນທຸລະກິດ ສົ່ງຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
3. ໜັງສືຢັ້ງຢືນຄວາມຕ້ອງການແຮງງານ ຂອງປະເທດຮັບແຮງງານ;
4. ສັນຍາຜູກພັນ ລະຫວ່າງ ຜູ້ອອກແຮງງານລາວ ກັບອົງການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
5. ສັນຍາສະໜອງແຮງງານ ລະຫວ່າງ ອົງການຈັດສົ່ງແຮງງານລາວໄປຕ່າງປະເທດ ກັບ ຫົວໜ່ວຍແຮງງານ ຫຼື ບໍລິສັດຈັດຫາງານ ຂອງປະເທດຮັບ;
6. ສັນຍາແຮງງານ ລະຫວ່າງ ຜູ້ອອກແຮງງານ ກັບຜູ້ໃຊ້ແຮງງານ ຫຼື ລະຫວ່າງ ຜູ້ຕາງໜ້າຜູ້ອອກແຮງງານ ກັບ ຜູ້ຕາງໜ້າຜູ້ໃຊ້ແຮງງານ.

### ມາດຕາ 17 ການພິຈາລະນາອອກອະນຸຍາດ

ພາຍຫຼັງ ທີ່ໄດ້ຮັບສຳນວນເອກະສານຖືກຕ້ອງ ແລະ ຄົບຖ້ວນແລ້ວ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຕ້ອງຄົ້ນຄ້ວາ ແລະ ມີຄຳເຫັນ ກ່ຽວກັບການອອກອະນຸຍາດຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ.

### ມາດຕາ 18 ຄ່າທຳນຽມ ແລະ ຄ່າບໍລິການ

ຄ່າທຳນຽມ ແລະ ຄ່າບໍລິການ ການຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ໃຫ້ປະຕິບັດຕາມລັດຖະບັນຍັດ ຂອງປະທານປະເທດ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 5
## ປະເພດອາຊີບ ແລະ ຂົງເຂດ ທີ່ບໍ່ອະນຸຍາດໃຫ້ສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ

### ມາດຕາ 19 ປະເພດອາຊີບ ທີ່ບໍ່ອະນຸຍາດໃຫ້ສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ

ປະເພດອາຊີບ ທີ່ບໍ່ອະນຸຍາດໃຫ້ສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ມີ ດັ່ງນີ້:

1. ອາຊີບ ທີ່ຂັດກັບຮີດຄອງປະເພນີ, ວັດທະນະທຳ ແລະ ກົດໝາຍ ຂອງ ສປປ ລາວ ເປັນຕົ້ນ ການເປັນໂສເພນີ, ເປັນນາຍໜ້າຄ້າມະນຸດ, ເປັນນາຍໜ້າຄ້າໂສເພນີ, ຂາຍອາວຸດ, ບໍລິການອາບອົບນວດ ທີ່ມີ

ລັກສະນະບໍລິການທາງເພດ, ການຂາຍອຸປະກອນລາມົກ, ວຽກສະແດງອານາຈານ, ລາມົກ ຫຼື ຖ່າຍຮູບເປືອຍ;

2. ອາຊີບ ທີ່ເປັນອັນຕະລາຍຕໍ່ສຸຂະພາບ ແລະ ຊີວິດຂອງຜູ້ອອກແຮງງານ ເປັນຕົ້ນ ການສຳຜັດ ຫຼື ຜະລິດສານເຄມີ ແລະ ວັດຖຸລະເບີດ, ວຽກກ່ຽວກັບເຄື່ອງຈັກທີ່ມີສຽງດັງເກີນມາດຕະຖານ, ການຫາປາໃນທະເລທີ່ນຳໃຊ້ເຮືອຂະໜາດນ້ອຍ ເພື່ອຈັບປາ, ວຽກທີ່ມີຄວາມສ່ຽງໃຫ້ເກີດພະຍາດຕິດແປດ ແລະ ວຽກງານຈັບສັດຮ້າຍ ຫຼື ສັດຕ້ອງຫ້າມ.

**ມາດຕາ 20 ຂົງເຂດ ແລະ ປະເທດທີ່ຫ້າມ**

ຂົງເຂດ ແລະ ປະເທດ ທີ່ຫ້າມສົ່ງຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ມີ ດັ່ງນີ້:

1. ເປັນຂົງເຂດ ແລະ ເປັນປະເທດ ທີ່ປະກາດຕົນເອງວ່າ ຈະເກີດສົງຄາມ ຫຼື ບໍ່ຮັບປະກັນຄວາມປອດໄພ;
2. ເປັນເຂດ ແລະ ເປັນປະເທດ ທີ່ມີການຮົ່ວໄຫຼ ຂອງສານເຄມີ ໃນລະດັບທີ່ເປັນອັນຕະລາຍ ຕໍ່ສຸຂະພາບ ຂອງຄົນ ຍ້ອນສາເຫດ ການເກີດສົງຄາມ, ການເກີດອຸປະຕິເຫດດ້ານພະລັງນິວເຄຼຍ, ພະຍາດທີ່ລະບາດ ຈາກຄົນ ສູ່ ຄົນ ຫຼື ສາເຫດອື່ນ ທີ່ສົ່ງຜົນກະທົບ ຕໍ່ສຸຂະພາບ ຂອງຄົນ;
3. ເປັນຂົງເຂດ ແລະ ເປັນປະເທດ ທີ່ຍັງບໍ່ມີສັນຍາຮ່ວມມືສອງຝ່າຍດ້ານການຈ້າງແຮງງານ ແລະ ຍັງບໍ່ມີ ຄວາມສຳພັນທາງດ້ານການທູດ ກັບ ສປປ ລາວ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 21 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງຂອງລັດ**

ຫ້າມພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງລັດ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດ ແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ;
2. ການກົດໜ່ວງຖ່ວງດຶງເອກະສານ;
3. ເມີນເສີຍ ຫຼື ຂັດຂວາງ ວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
4. ການສະໜອງຂໍ້ມູນ ທີ່ບໍ່ຖືກຕ້ອງ ກ່ຽວກັບການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ໂດຍສະເພາະຄວາມຕ້ອງການແຮງງານໃນຕະຫຼາດແຮງງານຢູ່ຕ່າງປະເທດ ໃຫ້ບໍລິສັດຈັດຫາງານ ເພື່ອຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
5. ປອມແປງ ຫຼື ອອກ ເອກະສານ ໂດຍບໍ່ຖືກຕ້ອງ;
6. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ ແລະ ຈັນຍາບັນ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ ຕໍ່ ລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
7. ຂໍເອົາ, ຮຽກເອົາ, ທວງເອົາ, ໃຫ້ ຫຼື ຮັບເອົາສິນບົນ ຫຼື ເປັນສື່ກາງ ໃນການໃຫ້ສິນບົນ;
8. ຮຽກ ຫຼື ທວງເອົາ ຄ່າທຳນຽມ, ຄ່າບໍລິການ ແລະ ນຳໃຊ້ລາຍຮັບ ບໍ່ຖືກຕ້ອງ ຕາມກົດໝາຍ;
9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 22 ຂໍ້ຫ້າມສຳລັບອົງການຈັດສົ່ງແຮງງານລາວໄປຕ່າງປະເທດ**

ຫ້າມອົງການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ມີພຶດຕິກຳ ດັ່ງນີ້:

1. ໃຫ້ບໍລິການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ໃຫ້ຜູ້ອື່ນນຳໃຊ້ ໃບອະນຸຍາດດຳເນີນທຸລະກິດຈັດຫາງານ;

3. ໃຫ້ບໍລິການ ໂດຍສ້າງເງື່ອນໄຂກີດກັ້ນ ການສະໝັກໄປເຮັດວຽກຢູ່ຕ່າງປະເທດ ໂດຍສະເພາະ ການຈໍາແນກ ເພດ, ການບັງຄັບ ທາງກົງ ຫຼື ທາງອ້ອມ;
4. ປົກປິດ ຂໍ້ມູນ ຂ່າວສານ ໃນຂະບວນການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
5. ສ້າງເງື່ອນໄຂທີ່ເປັນປັດໄຈສ່ຽງ ໃນການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
6. ຮຽກ ຫຼື ທວງເອົາ ຄ່າທໍານຽມ, ຄ່າບໍລິການ ແລະ ນໍາໃຊ້ລາຍຮັບວິຊາການ ທີ່ບໍ່ຖືກຕ້ອງ ຕາມກົດໝາຍ;
7. ເກັບເງິນຄ່າມັດຈໍາ ຫຼື ໃຫ້ນໍາເອົາວັດຖຸສິ່ງຂອງ ທີ່ມີຄ່າມັດຈໍາ ເພື່ອຈັດສົ່ງໄປເຮັດວຽກຢູ່ຕ່າງປະເທດ;
8. ສ້າງສັນຍາ ທີ່ມີລັກສະນະບັງຄັບ ຫຼື ເປັນຂໍ້ຜູກມັດ ຜູ້ອອກແຮງງານ;
9. ໂຄສະນາການບໍລິການ ທີ່ເກີນຄວາມເປັນຈິງ;
10. ສົ່ງແຮງງານລາວໄປເຮັດວຽກ ຕາມອາຊີບ ທີ່ໄດ້ກໍານົດໄວ້ໃນມາດຕາ 19 ຂອງດໍາລັດສະບັບນີ້;
11. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ຂອງປະເທດສົ່ງແຮງງານ ແລະ ປະເທດຮັບແຮງງານ.

**ມາດຕາ 23 ຂໍ້ຫ້າມສໍາລັບຜູ້ອອກແຮງງານ**

ຫ້າມຜູ້ອອກແຮງງານລາວທີ່ຈະໄປເຮັດວຽກຢູ່ຕ່າງປະເທດ ມີພຶດຕິກໍາ ດັ່ງນີ້ :

1. ໃຫ້ ຫຼື ເປັນສື່ກາງ ໃນການໃຫ້ສິນບົນແກ່ເຈົ້າໜ້າທີ່ ຫຼື ພະນັກງານທີ່ກ່ຽວຂ້ອງກັບວຽກງານສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
2. ຊຸກເຊື່ອງ, ປິດບັງ, ບິດເບືອນ ຂໍ້ມູນ ຂ່າວສານ ກ່ຽວກັບການສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
3. ປະຕິເສດການເຂົ້າຮ່ວມກິດຈະກໍາຕ່າງໆ ຕາມກົດໝາຍ;
4. ປະລະໜ້າທີ່ ຫຼື ຢຸດເຊົາວຽກ ໂດຍບໍ່ໄດ້ຮັບອະນຸຍາດ;
5. ປ່ຽນຜູ້ໃຊ້ແຮງງານ ຫຼື ກັບຄືນປະເທດ ໂດຍບໍ່ຖືກຕ້ອງ ຫຼື ບໍ່ໄດ້ຮັບອະນຸຍາດ ຈາກອົງການຈັດສົ່ງແຮງງານ ແລະ ອົງການຮັບເອົາແຮງງານ;
6. ລະເມີດ ສັນຍາຜູກພັນ, ສັນຍາແຮງງານ ແລະ ກົດໝາຍ;
7. ລະເມີດສິດສ່ວນບຸກຄົນ ຂອງຄົນອື່ນ;
8. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ຂອງປະເທດສົ່ງແຮງງານ ແລະ ປະເທດຮັບແຮງງານ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາ ວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ

**ມາດຕາ 24 ອົງການຄຸ້ມຄອງ ແລະ ກວດກາ ວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ ແລະ ກວດກາ ວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ປະກອບດ້ວຍ:

1. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
2. ພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ;
3. ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍນະໂຍບາຍ, ຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ເປັນນິຕິກຳ ລຸ່ມກົດໝາຍ, ແຜນການ, ແຜນງານ ແລະ ໂຄງການລະອຽດ ແລ້ວຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ນິຕິກຳ ລຸ່ມກົດໝາຍ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ໃຫ້ທົ່ວປວງຊົນ ຮັບຮູ້ ແລະ ເຂົ້າໃຈ;
4. ພິຈາລະນາ ການຂໍຕໍ່ ຫຼື ຍຸບເລີກ ການດຳເນີນທຸລະກິດ ບໍລິການຈັດຫາງານ ແລະ ສ້າງຕັ້ງສາຂາ ຂອງວິສາຫະກິດບໍລິການຈັດຫາງານຢູ່ ຂັ້ນແຂວງ;
5. ຄົ້ນຄວ້າ, ພິຈາລະນາ ແລະ ສະເໜີແຕ່ງຕັ້ງ ຜູ້ຕາງໜ້າດ້ານແຮງງານ ໄປປະຈຳຢູ່ສຳນັກງານຜູ້ຕາງໜ້າການທູດ ຫຼື ສຳນັກງານຜູ້ຕາງໜ້າກົງສຸນ ຂອງ ສປປ ລາວ ປະຈຳຢູ່ຕ່າງປະເທດ ເພື່ອເຮັດໜ້າທີ່ຄຸ້ມຄອງແຮງງານລາວ ຢູ່ຕ່າງປະເທດ ໃນກໍລະນີ ທີ່ເຫັນວ່າ ມີຄວາມຈຳເປັນ;
6. ອະນຸມັດ ບັນຊີລາຍຊື່ ແລະ ໃບອະນຸຍາດ ການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
7. ພິຈາລະນາ ໃຫ້ຫົວໜ່ວຍແຮງງານ ຈັດສົ່ງຜູ້ອອກແຮງງານລາວ ໄປຝຶກງານ ໃນສາຂາຫົວໜ່ວຍແຮງງານຂອງຕົນ ຢູ່ຕ່າງປະເທດ;
8. ຊຸກຍູ້ ອົງການຈັດສົ່ງແຮງງານລາວໄປຕ່າງປະເທດ ຕິດຕາມ ແລະ ຄຸ້ມຄອງ ຜູ້ອອກແຮງງານລາວ ທີ່ເຮັດວຽກຢູ່ຕ່າງປະເທດ ໃຫ້ໄດ້ຮັບການປົກປ້ອງ ສິດ ແລະ ຜົນປະໂຫຍດ ຕາມກົດໝາຍ;
9. ຊຸກຍູ້ ແລະ ສົ່ງເສີມ ໃຫ້ຜູ້ອອກແຮງງານລາວ ທີ່ສິ້ນສຸດສັນຍາການເຮັດວຽກຢູ່ຕ່າງປະເທດ ປະກອບອາຊີບ ພາຍໃນປະເທດ, ສືບຕໍ່ ຍົກລະດັບ ແລະ ພັດທະນາສີມືແຮງງານ ພ້ອມທັງຖ່າຍທອດຄວາມຮູ້ ແລະ ຄວາມສາມາດ ເຂົ້າໃນການພັດທະນາເສດຖະກິດ ແລະ ສັງຄົມ;
10. ເກັບກຳ ແລະ ສະໜອງ ຂໍ້ມູນ ຂ່າວສານ ກ່ຽວກັບຄວາມຕ້ອງການ ຂອງຕະຫຼາດແຮງງານ ແລະ ສ້າງແຜນການສະໜອງແຮງງານ ຕາມຄວາມຕ້ອງການ ຂອງຕະຫຼາດແຮງງານ;
11. ແຈ້ງຂໍ້ມູນ ຂອງແຮງງານລາວ ທີ່ຖືກຈັດສົ່ງໄປເຮັດວຽກຢູ່ຕ່າງປະເທດ ໃຫ້ສຳນັກງານຜູ້ຕາງໜ້າການທູດ ຫຼື ສຳນັກງານຜູ້ຕາງໜ້າກົງສຸນ ຂອງ ສປປ ລາວ ປະຈຳຢູ່ປະເທດ ຮັບຊາບແຮງງານ;
12. ອອກ, ໂຈະ ຫຼື ລຶບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
13. ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງ ປະເທດ;
14. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
15. ບຳລຸງສ້າງ ບຸກຄະລາກອນ ແລະ ປຸກຈິດສຳນຶກ ໃຫ້ແກ່ທຸກພາກສ່ວນໃນສັງຄົມ ກ່ຽວກັບວຽກງານການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
16. ປະສານ ສົມທົບ ກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;

16. ປະສານ ສົມທົບ ກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
17. ພົວພັນ ແລະ ຮ່ວມມື ກັບທຸກພາກສ່ວນ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
18. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
19. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 26 ສິດ ແລະ ໜ້າທີ່ຂອງ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ**

ພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ຍຸດທະສາດ, ລະບຽບການ ກ່ຽວກັບການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ຍຸດທະສາດ, ລະບຽບການ ກ່ຽວກັບການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
3. ຊີ້ນຳ, ຕິດຕາມ ກວດກາ, ຊຸກຍູ້ ແລະ ຈັດຕັ້ງປະຕິບັດວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
4. ຊຸກຍູ້ ແລະ ສົ່ງເສີມໃຫ້ຜູ້ອອກແຮງງານລາວ ທີ່ສິ້ນສຸດສັນຍາການເຮັດວຽກຢູ່ຕ່າງປະເທດ ປະກອບອາຊີບ ພາຍໃນປະເທດ, ສືບຕໍ່ຍົກລະດັບ ແລະ ພັດທະນາສີມືແຮງງານ ພ້ອມທັງຖ່າຍທອດຄວາມຮູ້ ແລະ ຄວາມສາມາດ ເຂົ້າໃນການພັດທະນາເສດຖະກິດ ແລະ ສັງຄົມ;
5. ສະເໜີ ບຳລຸງສ້າງບຸກຄະລາກອນ ພ້ອມທັງປູກຈິດສຳນຶກໃຫ້ແກ່ທຸກພາກສ່ວນໃນສັງຄົມ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
6. ຄົ້ນຄວ້າຄຳຮ້ອງຂໍສ້າງຕັ້ງ ຫລື ລົບລ້າງຕາໜ່າງບໍລິການຈັດຫາງານ ແລ້ວນຳສະເໜີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ພິຈາລະນາ ຕົກລົງ;
7. ຕິດຕາມ ແລະ ຄຸ້ມຄອງ ການເຄື່ອນໄຫວຂອງບໍລິສັດຈັດຫາງານ, ຕາໜ່າງບໍລິການຈັດຫາງານ ແລະ ສູນພັດທະນາສີມືແຮງງານ ທີ່ໄດ້ຮັບການສ້າງຕັ້ງຂຶ້ນ;
8. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
9. ປະສານ ສົມທົບ ກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
10. ຢັ້ງຢືນ ບັນຊີລາຍຊື່ ຂອງຜູ້ອອກແຮງງານ ພາຍໃນແຂວງຂອງຕົນ ກ່ອນຈະຈັດສົ່ງໄປເຮັດວຽກຢູ່ຕ່າງປະເທດ ພາຍຫຼັງທີ່ໄດ້ຮັບການຝຶກອົບຮົມກ່ອນການຈັດສົ່ງ;
11. ພົວພັນ ແລະ ຮ່ວມມື ກັບທຸກພາກສ່ວນ ທັງພາຍໃນ, ຕ່າງປະເທດ ກ່ຽວກັບວຽກງານຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;
12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຢ່າງເປັນປົກກະຕິ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 27 ສິດ ແລະ ໜ້າທີ່ຂອງຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ**

ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ຍຸດທະສາດ, ລະບຽບການ ກ່ຽວກັບການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ກົດໝາຍ, ຍຸດທະສາດ, ລະບຽບການ ກ່ຽວກັບການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
3. ຊີ້ນຳ, ຕິດຕາມ ກວດກາ, ຊຸກຍູ້ ແລະ ຈັດຕັ້ງປະຕິບັດ ວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
4. ຊຸກຍູ້ ແລະ ສົ່ງເສີມ ໃຫ້ຜູ້ອອກແຮງງານລາວ ທີ່ສິ້ນສຸດສັນຍາການເຮັດວຽກຢູ່ຕ່າງປະເທດ ປະກອບອາຊີບ ພາຍໃນປະເທດ, ສືບຕໍ່ຍົກລະດັບ ແລະ ພັດທະນາສີມືແຮງງານ ພ້ອມທັງຖ່າຍທອດຄວາມຮູ້ ແລະ ຄວາມສາມາດ ເຂົ້າໃນການພັດທະນາເສດຖະກິດ ແລະ ສັງຄົມ;
5. ຕິດຕາມ ແລະ ຄຸ້ມຄອງ ການເຄື່ອນໄຫວຂອງຕາໜ່າງບໍລິການຈັດຫາງານ ແລະ ສູນພັດທະນາສີມືແຮງງານ ທີ່ໄດ້ຮັບການສ້າງຕັ້ງຂຶ້ນ;
6. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
7. ຢັ້ງຢືນ ບັນຊີລາຍຊື່ ຂອງຜູ້ອອກແຮງງານພາຍໃນເມືອງຂອງຕົນ ກ່ອນຈະຖືກຈັດສົ່ງໄປເຮັດວຽກຢູ່ຕ່າງປະເທດ;
8. ຕິດຕາມ ແລະ ເກັບກຳ ຂໍ້ມູນ-ຂ່າວສານ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
9. ສະເໜີ ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ນຳໃຊ້ມາດຕະການ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
10. ປະສານ ສົມທົບ ກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ໃຫ້ອົງການປົກຄອງ ຂັ້ນແຂວງ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຢ່າງເປັນປົກກະຕິ;
12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 28 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ມີສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ໃນວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 29 ເນື້ອໃນການກວດກາ**

ການກວດກາວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດ ກົດໝາຍ, ລະບຽບການ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ;
2. ການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ;
3. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ.

**ມາດຕາ 30 ຮູບການການກວດກາ**

ການກວດກາ ວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ມີສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນ ເມື່ອມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;
3. ການກວດກາ ແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍ ທີ່ຖືກກວດກາຮູ້ລ່ວງໜ້າ.

## ໝວດທີ 8
## ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 31 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການຄຸ້ມຄອງວຽກງານຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ຢ່າງມີຄຸນນະພາບ ແລະ ດຳເນີນຖືກຕ້ອງ ຕາມກົດໝາຍ ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 32 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ກໍລະນີເບົາ ຫຼື ໜັກ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 33 ການຈັດຕັ້ງປະຕິບັດ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 34 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍ ການສົ່ງຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ສະບັບເລກທີ 68/ນຍ, ລົງວັນທີ 28 ພຶດສະພາ 2002.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ຕາງໜ້າລັດຖະບານແຫ່ງ ສປປ ລາວ**

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ